ຂໍຂອບໃຈລ່ວງໜ້າ ຜູ້ມາອ່ານຄຳກອນ
ຫຼອນສົ່ງຄຳຕິຊົມ ຍອມຮັບຄວາມຈິງແທ້
ອັ້ໃດຜິດຊິຂໍແກ້ ແນະນຳມາຊິຂໍປ່ຽນ
ເຣື່ອງການຂີດການຂຽນ ເຕືອນສະຕິແຕ່ງແຕ້ມ ແຖມຄວາມຮູ້ຈາກຜູ້ຊົມ

ສັດສີ່ຕີນຍັງພາດລົ້ມ ຊຸມນັກປາດ ຍັງມີຜິດ ຈິງໃດ
ຈິດຜ່ອງໃສ ໃຈບານ ການອ່ານຂຽນບໍ່ຄາຂ້ອງ
ຍາມໃດໜມອງໃຈເສົ້າ ເຮົາຝືນຂຽນກອນໜມອງໝົ່ນ
ຍາມໃດໃຈສັບສົນ ຫຼາຍວົນແນວວຽກວຸ້ນ ຢ່າຣຸນໝົ້ນເຣື່ອງແຕ່ງກອນ

ຂໍຂອບໃຈສົ່ງຢ້ອນ ວອນອ້າຍ ປິ່ນປະສົງ
ຜູ້ສົ່ງຄຳຕິຊົມ ມັກນິຍົມການຂຽນນ້ອງ
ຈຳປາທອງກໍໄຂຊີ້ ວ່າຍິນດີຮັບນ້ອງໃໝ່
ກັບທ່ານວັງນ້ຳໃຈ ອ່ານຄຳກອນບໍ່ໄດ້ ຈົ່ງລອງໃຊ້ປ່ຽນ ຟ້ອນທ໌

ສ່ວນຄຳກອນຂ້ອຍນັ້ນ ໃຫ້ທ່ານປ່ຽນ ຟ້ອນທ໌ ອາລິສ ແນ່ເດີ
ຫາກຕິດຂັດເປັນບາງຕອນ ຍ້ອນວ່າຟ້ອນທ໌ ອັກສອນນ້ອຍ
ຫຼອຍປ່ຽນ Size ຂຍາຍຂຶ້ນ ປະມານ 20 ພໍຂນາດ
ບາງທີອາດອ່ານໄດ້ ແນວໃດແລ້ວຫາກຊິເຫັນ

ທີ່ຈິງ ຕອນຖືກສາວຕອກເນັ້ນ ເກືອບໂຕນເຜ່ນເວທີ ແລ້ວໃດ
ແຕ່ວ່າ ສາວຫຼັກເຈັດຄືນດີ ເພິ່ນໄດ້ວາຈີເວົ້າ
ຢ່າເຊົາຂຽນເດີອ້າຍ ຍັງຕິດໃຈກອນອ້າຍແຕ່ງ ວ່າຊ້ານ
ຈຳປາແດງ ພັດເປັນຄືນມັກຍ້ອງ ຈຶ່ງລອງເຕື້ອງຕໍ່ກອນ

ຝາກຂອບໃຈສົ່ງຢ້ອນ ບັງອອນຊື່ ຕະວັນ ລັບ
ຮັບຕ້ອນຊາຍໃນເວທີ ບາງເທື່ອມີ ຂອງຕ້ອນ
ຍັງສະອອນຄຳເວົ້າ ສາວຫຼັກເຈັດ ຍອມຂໍໂທດ
ບໍ່ໂກດເຄືອງໃຫ້ອ້າຍ ຫາຍຫັນແລ້ວ ຊໍ່າສເມີ ອີ່ຫຼີບໍ?

ຖືວ່າ ວ່າອ້າຍພັ້ງເພີ້ ສະເວີປ່ວງຄືນດຽວ ກະຢ່າເນາະ
ລອງກ້ຽວແຊວສາວງາມ ຖືກຕອກຕຳຈົນຝັ້ງ

ອ້າຍສິງເອີຍ... ຍາມເຫັນປາຊິວທິ້ງ   ແຈຄັນນາ ໃຫ້ເຈົ້າຟ້າວ ຫວິງຮ່ອນ...
ບາດເຂົາເອົາໄປກິນກ່ອນ ຊິສະອອນອ່າວໂອ້  ຢ້ານໂງຖິ້ມ ຮອດສວິງ... ໜ່າຍເດ

ເປັນຫຣັງນໍຈິ່ງມິດນິ້ງ   ທາງອ້າຍໃຫຣ່ສຸກຂີງຄຳ
ບົດລຳນຳກັບສຽງເພງ   ໃຫ້ເກົ່ງຫຼາຍຄົນຍໍຍ້ອງ
ຫຼືມີແມວຂັດຂ້ອງ   ໃຫ້ລອງຈາມາເບິ່ງ ແມ່ດູ໋
ນ້ອງສົ່ງກອນມາແຕ່ເທິງ   ຫຣັງຄືມິດອິມສົ້ນ ຫຼືລືມຖິ້ມຮອດກອນ ບໍນໍ..

ຂໍສັນຍາ ວ່າຊິເປັນຄົນປ້ອນ   ເຣື່ອງກອນໃໝ່ລຳນຳເພງ
ຖືສັຈຈະຊິຂຽນເອງ   ແລ້ວສົ່ງເພງເຖິງອ້າຍ
ຫຼາຍຄົນພຶມພຳໄຫ້   ຍາມຟັງສຽງອ້າຍອ່ານ
ສຽງອ້າຍຊຶ້ງແສນຫວານ ສະທ້ານໃຈທຸກຄັ້ງ  ຟັງແລ້ວເປີດບໍ່ເປັນ...